ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ...1244.../ຜ-ຟຟລ.

ນະຄອນຫລວງວຽງຈັນ, ວັນທີ... 10 JUN 2019

# ແຈ້ງການ

ຮຽນ: ບັນດາທ່ານຜູ້ຖືຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທີ່ນັບຖື.

ເລື່ອງ: ຜົນສໍາເລັດການຮັບໂອນຮຸ້ນຂອງເຂື່ອນໄຟຟ້າ ນໍ້າອູ 2,5,6 .

- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ ຂອງຕະຫຼາດຫຼັກຊັບລາວ ສະບັບເລກທີ: 330/ຕລຊລ, ລົງວັນທີ 27/ 09 /2018.
- ອີງຕາມ ໃບຢັ້ງຢືນການໂອນຮຸ້ນ ສະບັບເລກທີ່ 02,2019, ລົງວັນທີ 23/05/2019.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ຂໍຖືເປັນກຽດແຈ້ງບັນດາທ່ານໃຫ້ຊາບວ່າ ມາຮອດປະຈຸບັນນີ້ ການຮັບໂອນເຂື່ອນຈາກລັດວິສາຫະກິດໄຟຟ້າລາວຄື: ເຂື່ອນໄຟຟ້າ ນໍ້າອູ 2, 5, 6 ໄດ້ສໍາເລັດຕາມລະບຽບກົດໝາຍຂອງ ສປປ ລາວ ເປັນທີ່ຮຽບຮ້ອຍແລ້ວ, ໃນວັນທີ 23 ພຶດສະພາ 2019, ລາຍລະອຽດມີດັ່ງລຸ່ມນີ້:

1. ເຂື່ອນໄຟຟ້າ ນໍ້າອູ 2: ມີກໍາລັງຕິດຕັ້ງ 120 ເມກາວັດ (ຜ-ຟຟລ) ໄດ້ເຂົ້າຖືຮຸ້ນ 15% ຄິດເປັນກໍາລັງຜະລິດ ໃນສ່ວນຂອງການຖືຮຸ້ນເທົ່າກັບ 18 ເມກາວັດ.
2. ເຂື່ອນໄຟຟ້າ ນໍ້າອູ 5: ມີກໍາລັງຕິດຕັ້ງ 240 ເມກາວັດ (ຜ-ຟຟລ) ໄດ້ເຂົ້າຖືຮຸ້ນ 15% ຄິດເປັນກໍາລັງຜະລິດ ໃນສ່ວນຂອງການຖືຮຸ້ນເທົ່າກັບ 36 ເມກາວັດ.
3. ເຂື່ອນໄຟຟ້າ ນໍ້າອູ 6: ມີກໍາລັງຕິດຕັ້ງ 180 ເມກາວັດ (ຜ-ຟຟລ) ໄດ້ເຂົ້າຖືຮຸ້ນ 15% ຄິດເປັນກໍາລັງຜະລິດ ໃນສ່ວນຂອງການຖືຮຸ້ນເທົ່າກັບ 27 ເມກາວັດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືເປັນຢ່າງສູງ,

**ຜູ້ອໍານວຍການໃຫຍ່**

ກະຊວງ ພະລັງງານ ແລະ ບໍ່ແຮ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company ນະຄອນຫຼວງ ວຽງຈັນ

ລັດຕະນາ ປະທຸມວັນ

ຖະໜົນ ມິດຕະພາບ ລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ,ນະຄອນຫຼວງວຽງຈັນ, ສປປລາວ, ຕູ້ ປ.ນ 2392, ນະຄອນຫລວງວຽງຈັນ.
ໂທລະສັບ: (856-21) 316142 ແຟັກ: (856-21) 316141. ອີເມລ: edlgenhq@edlgen.com.la; ເວັບໄຊທ໌: www.edlgen.com.la